

# SuPER WE Coffee

## ວຽກເດັ່ນຂອງ ໂຄງການປີ 2023-2024

**ທັນວາ:** ກອງປະຊຸມ ວິຊາການຮ່ວມກັບຄູ່ຮ່ວມງານ ພາກລັດ ຂັ້ນແຂວງ ແລະ ຂັ້ນເມືອງ

**ມັງກອນ:** ກອງປະຊຸມ ສະຫຼຸບການຈັດຕັ້ງປະຕິບັດປະຈຳປີ 2023 ແລະ ວາງແຜນກິດຈະກຳປີ 2024, ສົ່ງເສີມ ແລະ ຕິດຕາມການຈັດຕັ້ງປະຕິບັດກິດຈະກຳ ໂຮງຮຽນຊາວກະສິກອນ

**ກຸມພາ:** ກອງປະຊຸມ ທົບທວນກົດລະບຽບ ແລະ ໜ້າທີ່ຮັບຜິດຊອບໃນກຸ່ມຜະລິດກາເຟໃນ 5 ບ້ານ, ງານວາງສະແດງ ບຸນກາເຟ-ຊາ ແລະ ຜົນຜະລິດກະສິກຳ ພູພຽງບໍລະເວນ ປະຈຳປີ 2024, ກອງປະຊຸມຄູ່ຮ່ວມພັດທະນາຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເຊກອງ

### ຜູ້ທີ່ໄດ້ຮັບຜົນປະໂຫຍດ
ທັນວາ 2023 - ກຸມພາ 2024

ຊາວສວນກາເຟ
**1,014**

ແມ່ຍິງຊົນເຜົ່າ
**435**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານ ການສະໜັບສະໜູນສ້າງຕັ້ງສູນແປຮູບກາເຟ, ສະໜອງເຕັກນິກ ການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມືວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ





# ທັນວາ

## ກອງປະຊຸມ ວິຊາການຮ່ວມກັບຄູ່ຮ່ວມງານ ພາກລັດ ຂັ້ນແຂວງ ແລະ ຂັ້ນເມືອງ



ວັນທີ 5 ທັນວາ 2023, ໂຄງການຊຸບເປີວີ ໄດ້ຈັດກອງປະຊຸມ ວິຊາການ ຮ່ວມກັບຄູ່ຮ່ວມງານພາກລັດ ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ຫ້ອງປະຊຸມ ແຂວງ ເຊກອງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 9 ທ່ານ (ແມ່ຍິງ 4 ທ່ານ). ຈຸດປະສົງຂອງກອງປະຊຸມແມ່ນເພື່ອລາຍງານຜົນຂອງການເຄື່ອນໄຫວທີ່ໄດ້ຈັດຕັ້ງປະຕິບັດໃນເດືອນພະຈິກ ແລະ ແຜນການດຳເນີນງານໃນເດືອນທັນວາ 2023. ສິ່ງທ້າທາຍອັນໃຫຍ່ຫຼວງແມ່ນການສະໜອງອຸປະກອນການເຮັດກາເຟ ສ່ວນໃຫຍ່ແມ່ນຢູ່ໃນໄລຍະລະດູຝົນເຮັດໃຫ້ມີການຂົນສົ່ງຊັກຊ້າ.



# ມັງກອນ

## ກອງປະຊຸມ ສະຫຼຸບການຈັດຕັ້ງປະຕິບັດປະຈຳ ປີ 2023 ແລະ ວາງແຜນກິດຈະກຳປີ 2024



ວັນທີ 10 - 12 ມັງກອນ 2024, ໂຄງການຊຸບເປີວີ ໄດ້ຈັດກອງປະຊຸມປະຈຳປີ 2023 ທີ່ແຂວງ ເຊກອງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 40 ທ່ານ (ແມ່ຍິງ 12 ທ່ານ). ຈຸດປະສົງແມ່ນເພື່ອສະຫຼຸບຄືນການປະຕິບັດກິດຈະກຳ ປະຈຳປີ 2023 ແລະ ວາງແຜນການ ປີ 2024. ຜູ້ຕາງໜ້າຈາກພະແນກ ກະສິກຳ ແລະ ປ່າໄມ້ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ໄດ້ສະແດງຄວາມພໍໃຈຕໍ່ຜົນໄດ້ຮັບ, ໂດຍສະເພາະແມ່ນການເພີ່ມລາຍຮັບໃຫ້ແກ່ຊຸມຊົນ. ຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ລົງຢ້ຽມຢາມ ບ້ານດາກເອີຍ ແລະ ບ້ານຄູນໄຊ ເພື່ອເບິ່ງຂະບວນແປຮູບກາເຟ, ໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດກຸ່ມຜະລິດກາເຟ ແລະ ຮັບຟັງແຜນການໃນຕໍ່ໜ້າຂອງກຸ່ມໃນປີ 2024.

switchasia · Haliéus · 4FORM · International Cooperative Alliance Asia and Pacific · ITC International Training Centre · FAIRTRADE ITALIA



## ມັງກອນ

### ສົ່ງເສີມ ແລະ ຕິດຕາມການຈັດຕັ້ງປະຕິບັດກິດຈະກໍາ ໂຮງຮຽນຊາວກະສິກອນ



ໃນວັນທີ 15 - 20 ມັງກອນ 2024, ທີມງານໂຄງການຊຸບເປີວີ ໄດ້ລົງຕິດຕາມ ແລະ ສະໜັບສະໜູນ ກຸ່ມຜະລິດກາເຟ ໃນການນໍາໃຊ້ເຮືອນຕາກກາເຟແບບໃໝ່, ເຄື່ອງລ້າງກາເຟ, ການປູກ ຫຍ້າລ້ຽງສັດ, ວາງແຜນການຕະຫຼາດ ແລະ ການຈັດຕັ້ງກຸ່ມກາເຟພາຍໃນບ້ານ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 104 ຄົນ (ແມ່ຍິງ 65 ທ່ານ). ມີ 7 ບ້ານທີ່ໄດ້ສໍາເລັດການກໍ່ສ້າງເຮືອນຕາກ ກາເຟຫຼັງໃໝ່ທີ່ມີຄວາມທົນທານ ແລະ ໃຊ້ເວລາໃນການຕາກກາເຟໄວກວ່າເກົ່າ, ສາມາດປ້ອງກັນກາເຟບໍ່ໃຫ້ຖືກທໍາລາຍຈາກດິນຟ້າອາກາດ ແລະ ຍັງຊ່ວຍປັບປຸງຄຸນະພາບກາເຟ. ນອກຈາກນັ້ນ, ຍັງມີ 3 ບ້ານ ທີ່ໂຄງການໄດ້ສະໜອງເຄື່ອງລ້າງກາເຟ ເຊິ່ງເຫັນວ່າ ສາມາດປະຢັດແຮງງານ, ນໍ້າ ແລະ ເວລາ.



## ມັງກອນ

### ກອງປະຊຸມ ທົບທວນກົດລະບຽບ ແລະ ໜ້າທີ່ຮັບຜິດຊອບ ໃນກຸ່ມຜະລິດກາເຟ ໃນ 5 ບ້ານ



ໃນລະຫວ່າງວັນທີ 20 ມັງກອນ - 3 ກຸມພາ 2024, ທີມງານໂຄງການຊຸບເປີວີ ໄດ້ຈັດກອງປະຊຸມ ທົບທວນກົດລະບຽບ ແລະ ໜ້າທີ່ຮັບຜິດຊອບໃນກຸ່ມຜະລິດກາເຟ ພາຍໃນ 5 ບ້ານ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 99 ທ່ານ (ແມ່ຍິງ 59 ທ່ານ). ຈຸດປະສົງແມ່ນເພື່ອນໍາສະເໜີທ່າແຮງໃນການຂາຍກາເຟໝາກຂາວເພື່ອໃຫ້ມີລາຍຮັບທີ່ສູງຂຶ້ນ, ພ້ອມທັງກວດກາຄືນພາລະບົດບາດ ແລະ ໜ້າທີ່ຂອງປະທານ ແລະ ສະມາຊິກກຸ່ມຜະລິດກາເຟ. ເຫັນໄດ້ວ່າ ທັງ 5 ບ້ານແມ່ນເຫັນດີໃຫ້ສືບຕໍ່ປະຕິບັດຕາມແຜນການຄຸ້ມຄອງກຸ່ມຜະລິດກາເຟ, ການຫັນປ່ຽນກາເຟໝາກແດງໄປເປັນກາເຟໝາກຂາວ ແລະ ຮັກສາມາດຕະຖານຄຸນະພາບຂອງກາເຟ.



## ກຸມພາ

### ກິດຈະກໍາຖ່າຍພາບ ແລະ ເກັບກໍາຂໍ້ມູນ 2 ບ້ານເປົ້າໝາຍ ຈາກ ອົງການແຄຣ໌ ຝຣັ່ງ

ວັນທີ 7 - 10 ກຸມພາ 2024, ທີມງານໂຄງການຊຸບເປີວີ ໄດ້ຕ້ອນຮັບຊ່າງພາບ ຟຣໍຣີເອນ ເດີ ຣາສເຊ ຈາກປະເທດຝຣັ່ງ, ເຊິ່ງໄດ້ຮັບໜ້າທີ່ໃຫ້ມາຖ່າຍຮູບຈາກມູນລະນິທິ ຣາຈາ ທີ່ເປັນສ່ວນໜຶ່ງໃນການຫາແຫຼ່ງທຶນເພີ່ມໃຫ້ແກ່ໂຄງການ. ທາງທີມງານໄດ້ລົງໄປເກັບຂໍ້ມູນີທີ່ ບ້ານດາກວໍ ແລະ ດາກເອີຍ. ຟຣໍຣີເອນ ໄດ້ຮ່ວມກັບແມ່ຍິງ 29 ຄົນ ເພື່ອຖ່າຍຮູບໃຫ້ກັບໂຄງການຂອງລາວທີ່ຊື່ວ່າ: HOW MUCH CAN YOU CARRY? ຮູບພາບທີ່ຖ່າຍໃນຄັ້ງນີ້ຈະໄດ້ຖືກວາງສະແດງຢູ່ທີ່ ປາຣີ ໃນງານວາງສະແດງ Photoclimat ໃນປີ 2025.






## ກຸມພາ

### ງານວາງສະແດງ ບຸນກາເຟ-ຊາ ແລະ ຜົນຜະລິດກະສິກໍາ ພູພຽງບໍລະເວນ ປະຈໍາປີ 2024

ວັນທີ 21 - 23 ກຸມພາ 2024, ໂຄງການຊຸບເປີວີ ໄດ້ເຂົ້າຮ່ວມວາງສະແດງ ຜະລິດຕະພັນ ກາເຟພູດອຍ ດາກຈຶງ ໃນງານ ບຸນກາເຟ-ຊາ ແລະ ຜົນຜະລິດກະສິກໍາ ປະຈໍາປີ 2024 ທີ່ ເມືອງ ປາກຊ່ອງ, ແຂວງ ຈໍາປາສັກ. ພາຍໃນງານກາເຟພູດອຍດາກຈຶງແມ່ນໄດ້ຮັບຄວາມສົນໃຈຫຼາຍ ເຊິ່ງສາມາດຂາຍໄດ້ທັງໝົດ 62 ຖົງ ລວມເປັນເງິນທັງໝົດ 4,335,000 ກີບ. ນອກຈາກນັ້ນ ປີນີ້ ເປັນປີທໍາອິດທີ່ຕົວແທນຈາກກຸ່ມຜະລິດກາເຟ ໄດ້ເຂົ້າຮ່ວມແຂ່ງຂັນ ການຊີງກາເຟ ເຊິ່ງໄດ້ຮັບລາງວັນເປັນໃບປະກາດຍັ້ງຢືນການເຂົ້າຮ່ວມ. ຊາວສວນກາເຟບໍ່ໄດ້ຮັບພຽງແຕ່ຄວາມຮູ້ ແລະ ທັກສະທີ່ຫຼາກຫຼາຍໃນກາເຟເທົ່ານັ້ນ, ແຕ່ນີ້ເປັນການເລີ່ມຕົ້ນທີ່ດີ ໃນການສ້າງເຄືອຂ່າຍທີ່ເຂັ້ມແຂງ ແລະ ຊ່ວຍໃຫ້ພວກເຂົາມີຄວາມມຸ່ງໝັ້ນໃນການເຮັດໃຫ້ ກາເຟມີການເຕີບໂຕທັງໃນລະດັບປະເທດ ແລະ ສາກົນ ໃນອະນາຄົດ.






# ກຸມພາ

## ກອງປະຊຸມຄູ່ຮ່ວມພັດທະນາ ຂອງ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ ເຊກອງ



ວັນທີ 29 ກຸມພາ 2024, ທີມງານໂຄງການຊຸບເປີວີ ໄດ້ນໍາພາຕົວແທນກຸ່ມຜະລິດກາເຟເຂົ້າຮ່ວມກອງປະຊຸມ ຄູ່ຮ່ວມພັດທະນາ ຂອງ ພະແນກກະສິກໍາ ແລະ ປ່າໄມ້ ທີ່ເມືອງ ລະມາມ, ແຂວງ ເຊກອງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 54 ທ່ານ (ແມ່ຍິງ 9 ທ່ານ). ຈຸດປະສົງແມ່ນເພື່ອຮັບຟັງການສະເໜີພາບລວມຂອງການຈັດຕັ້ງປະຕິບັດບັນດາໂຄງການຊ່ວຍເຫຼືອ ເພື່ອການພັດທະນາກະສິກໍາ ແລະ ວາງແຜນຮ່ວມກັນ ໃນການຍົກລະດັບຄວາມສາມາດທາງດ້ານການປະສານງານ, ວິທີແກ້ໄຂບັນຫາຮ່ວມກັນເຮັດໃຫ້ວຽກງານກິດຈະກໍາມີຜົນສໍາເລັດຕາມເປົ້າໝາຍທີ່ວາງໄວ້. ນອກຈາກນັ້ນ ທ່ານ ນາງ ເຜັດສະໝັນ ແລະ ທ່ານ ນາງ ຈິນຊີ ກໍໄດ້ຮັບໃບຍ້ອງຍໍຈາກການເປັນກຸ່ມຜະລິດກາເຟແມ່ຍິງ ທີ່ສ້າງຜົນງານຈາກການສົ່ງກາເຟເຂົ້າປະກວດແຂ່ງຂັນກາເຟຄຸນະພາບລະດັບສາກົນ ຈົນສາມາດຍາດໄດ້ອັນດັບ 2 ແລະ ອັນດັບ 3.



# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ

ບັນທຶກ ແລະ ແປໂດຍ: ທ່ານ ຈັດຕຸຄິງ ໄພຈິດ

“ຂ້ອຍໄດ້ຮຽນຮູ້ຫຼາຍຢ່າງຈາກ ການແປຮູບກາເຟໝາກແດງເປັນໝາກຂາວ ມັນບໍ່ພຽງແຕ່ຊ່ວຍເຮັດໃຫ້ຂ້ອຍມີລາຍຮັບທີ່ເພີ່ມຂຶ້ນ ແຕ່ມັນຍັງຊ່ວຍເຮັດໃຫ້**ຂ້ອຍເຂັ້ມແຂງ ແລະ ໄດ້ຮັບໂອກາດໃນການພັດທະນາຕົນເອງຫຼາຍຂຶ້ນ.**”

**ທ່ານ ນາງ ພິມສະຫວັນ**
**ສະມາຊິກ ກຸ່ມຜະລິດກາເຟ**
**ບ້ານ ດາກຣາຍ, ເມືອງ ດາກຈຶງ, ແຂວງ ເຊກອງ**



ພິມສະຫວັນ ກຳລັງລ້າງກາເຟໝາກຂຽວໃຫ້ສະອາດ.



ພຸດທິວັນ ກຳລັງຕາກກາເຟໝາກຂາວດ້ວຍຄວາມມ່ວນຊື່ນ.

“**ການຕາກເມັດກາເຟຕ້ອງຕາກກາເຟແຫ້ງສະໝ່ຳສະເໝີ ແລະ ຕ້ອງໄດ້ກວດມາດຕະຖານຄວາມຊຸ່ມຂອງເມັດກາເຟຢູ່ເລື້ອຍໆ** ເພາະເມື່ອໃດທີ່ກາເຟມີຄວາມຊຸ່ມເກີນມາດຕະຖານ ມັນຈະເຮັດ ໃຫ້ເຊື້ອລາເຕີບໂຕ, ໂຄງສ້າງເມັດກາເຟຖືກທຳລາຍ  ສິ່ງຜົນກະທົບເຮັດໃຫ້ລາຄາຂອງກາເຟຕ່ຳລົງຕາມຄຸນະພາບກາເຟ.”

**ທ່ານ ນາງ ພຸດທິວັນ ສີລາພອນ**
**ສະມາຊິກ ກຸ່ມຜະລິດກາເຟ**
**ບ້ານ ຄູນໄຊ, ເມືອງ ດາກຈຶງ, ແຂວງ ເຊກອງ**

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າ ອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@care.org

**ທ່ານ ຈັດຕຸຄົງ ໄພຈິດ**
ຜູ້ປະສານງານ ໂຄງການ ຊຸບເປີວີ
ເບີໂທ: (+856) 20 2229 1771
ອີເມລ: chattoukhong.phaichit@care.org

**ທ່ານ ນາງ ນາລາດາ ພົມວິໄຊ**
ທີ່ປຶກສາ ດ້ານການສື່ສານ ແລະ ການພົວພັນແບບມີສ່ວນຮ່ວມ
ເບີໂທ: (+856) 20 5600 5600
ອີເມລ: nalada.phomvixay@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່,
ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ: (+856-21) 217 727

ຫ້ອງການ ເຊກອງ
ເມືອງ ດາກຈຶງ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org
www.careint.org.la
@careinlaos
@careinlaos

care®